**SD USD** San Diego Unified School District

*Fact Sheet*

# ອາສາສມັກເປັນຕຳຣວດລາດຕະເວນໂຮງຮຽນ

ເມື່ອເດືອນກັນຍາ **2002**, ອາສາສມັກຕຳຣວດລາດຕະເວນເຂດສຶກສາແຊນດິເອໂກ (SPVP) ທີ່ຈັດຕັ້ງຂຶ້ນ ໂດຍເຈົ້າຫນ້າທີ່ຕຳຣວດບໍຣິການສັງຄົມສອງຄົນ, ພາຍໃຕ້ການຊີ້ນຳຂອງຜູ້ບັງຄັບກອງຮ້ອຍຂອງເຂົາເຈົ້າ. ຍ້ອນວ່າຄວາມປອດພັຍຂອງນັກຮຽນເປັນວຽກຮີບດ່ວນອັນທີນຶ່ງຂອງເຂົາເຈົ້າ, ແລະ ຫລັງຈາກສຳຣວດເບິ່ງຢູ່ຫລາຍເດືອນ, ເຂົາເຈົ້າຈຶ່ງໄດ້ກຳນົດວ່າໂຮງຮຽນໃດຕ້ອງການພໍ່ແມ່ລາດຕະເວນຮັກສາຄວາມປອດພັຍຫລາຍກວ່າຫມູ່. ເມື່ອເດືອນທັນວາຜ່ານມາ ໂຄງການທົດລອງໄດ້ກໍ່ໄດ້ເລີ້ມຂຶ້ນທີ່ໂຮງຮຽນຣໍຕັນກ່ອນຫມູ່.

ພໍ່ແມ່, ຊຸມຊົນ, ພະນັກງານໂຮງຮຽນ ແລະ ນັກຮຽນໄດ້ສະແດງຄວາມເປັນຫ່ວງກ່ຽວຕໍ່ຄວາມປອດພັຍຂອງພວກນັກຮຽນໃນຊ່ວງເວລາກ່ອນໂຮງຮຽນເຂົ້າ ແລະ ຫລັງຈາກໂຮງຮຽນເລີກ. ຈຸດປະສົງສຳຄັນຂອງຫນ່ວຍອາສາສມັກລາດຕະເວນແມ່ນເພື່ອເປັນຫູເປັນຕາໃຫ້ແກ່ຕຳຣວດໂຮງຮຽນ ແລະ ພະນັກງານປົກຄອງໂຮງຮຽນທາງດ້ານຄວາມປອດພັຍຂອງພວກນັກຮຽນທຸກຄົນ.

SPVP ປະກອບຂຶ້ນດ້ວຍອາສາສມັກພໍ່ແມ່ ແລະ ຊຸມຊົນ ໂດຍສວມເສື້ອນອກສີສົ້ມ ລາຍແຊກສີເຫລືອງໃສ, ຕິດຕໍ່ກັນທາງວິທຍຸໄດ້ສອງທາງ ໄປຫາພະນັກປົກຄອງໂຮງຮຽນ ຫລື ຕຳຣວດບໍຣິການໂຮງຮຽນ. ໃນຊ່ວງ **45** ນາທີ ຂອງວັນເຂົ້າໂຮງຮຽນທຸກວັນ, ເລີ້ມຈາກ ເຄິ່ງຊົ່ວໂມງກ່ອນເຂົ້າຮຽນ ແລະ ເຄິ່ງຊົ່ວໂມງຫລັງໂຮງຮຽນເລີກ, ຫນ່ວຍອາສາສມັກລາດຕະເວນ (SPVP) ຊ່ວຍຮັກສາຄວາມປອດພັຍທີ່ເສັ້ນມ້າລາຍຕໍ່ຫນ້າໂຮງຮຽນ, ແຄມຖນົນ ແລະ ອ້ອມຮອບໂຮງຮຽນ.

ນອກຈາກນີ້, ເຂົາເຈົ້າໄດ້ຂຽນປ້າຍຣົຖທີ່ແລ່ນໄວລົງໄວ້ ເພື່ອລາຍງານແກ່ເຈົ້າຫນ້າທີ່ຕຳຣວດໂຮງຮຽນຜູ້ຈະອອກໃບເຕືອນການແລ່ນຣົຖໄວ. ສິ່ງເຫລົ່ານີ້ໄດ້ຊ່ອຍຫລຸດຜ່ອນບັນຫາການຈອດຣົຖ, ພ້ອມທັງຈຳນວນຄົນແລ່ນຣົຖໄວ ແລະ ການຈອດຣົຖໃສ່ຂອບສີແດງ ທີ່ເປັນເຂດຫ້າມຈອດຣົຖ. ຄະນະ SPVP ໄດ້ທຸ້ມເທການຮັກສາຄວາມປອດພັຍແກ່ນັກຮຽນໃນຍາມເຂົ້າຮຽນຊ່ວງໂຮງຮຽນພັກ ແລະ ມີລາຍການພິເສດຕ່າງໆຫລັງຈາກໂຮງຮຽນເລີກແລ້ວ. ການເຮັດວຽກເປັນລະບົບຂອງພໍ່ແມ່ນີ້ຄືເຂົາເຈົ້າໄດ້ຜັດປ່ຽນເວລາກັນດູແລຮັກສາ ເມື່ອມີກິຈກັມພິເສດຕ່າງໆ ຊຶ່ງເຮັດໃຫ້ພໍ່ແມ່ທຸກໆຄົນມີໂອກາດໄດ້ມ່ວນຊື່ນກັບກິຈກັມຕ່າງໆຂອງໂຮງຮຽນ.

ຫລັງຈາກໄດ້ລົງມືປະຕິບັດງານຢູ່ໂຮງຮຽນປະຖົມຣໍຕັນນັ້ນແລ້ວ, ໂຮງຮຽນອື່ນໆກໍເລີ້ມໂຄງການນີ້ຂຶ້ນອີກ 10 ໂຮງຮຽນ. ເຈົ້າຫນ້າທີ່ຕຳຣວດບໍຣິການ ຄາດວ່າ ການເພີ້ມອີກ 10 ໂຮງຮຽນນີ້ ຈະໄດ້ປະຕິບັດງານ ໃນສົກຮຽນປີ **2004 – 05**. ກ່ອນສົກຮຽນສິ້ນສຸດລົງຂອງແຕ່ລະປີນັ້ນ, ເຈົ້າຫນ້າທີ່ຕຳຣວດໂຮງຮຽນຈະຈັດງານເປັນກຽດແກ່ນ້ຳໃຈເສັຍສລະ ແລະ ການເຮັດວຽກຢ່າງເອົາໃຈໃສ່ຂອງບັນດານັກອາສາສມັກ ເພື່ອຍ້ອງຍໍຄຸນງາມຄວາມດີຂອງເຂົາເຈົ້າ.

ກ່ອນພໍ່ແມ່ ແລະ ຊຸມຊົນຈະເຂົ້າຮ່ວມເປັນອາສາສມັກ SPVP ນີ້, ແມ່ນຂໍຮ້ອງໃຫ້ເຂົາເຈົ້າຂຽນປະກອບໃບຄຳຮ້ອງເພື່ອເປັນຫລັກຖານ ຊຶ່ງມີໄວ້ໃຫ້ຢູ່ທີ່ອິນເຕີເນດທີ່ http://www.sandi.net/pdf/comm_ntbk.pdf ຫນ້າ **80** ແລະ ອະນຸຍາດໃຫ້ກວດເບິ່ງປວັດເບື້ອງຫລັງ. ການກວດນີ້ຮວມທັງໃຊ້ຄອມພິວເຕີກວດເບິ່ງການກະທຳຜິດກົດຫມາຍ ແລະ ປຶກສາກັບກົດຫມາຍ ເມແກນ (Megan's Law). ລາຍລະອຽດກ່ຽວກັບເຈົ້າຫນ້າທີ່ຕຳຣວດບໍຣິການແຊນດິເອໂກນີ້, ຂໍໃຫ້ອ່ານເບິ່ງໄດ້ທີ່ຕາຫນ່າງຂ່າວ http://prod031.sandi.net/policeservices/.

## ຂໍ້ສລູບ

- **ຄວາມປອດພັຍຂອງນັກຮຽນແມ່ນຈຸດຫມາຍຕົ້ນຕໍຂອງອາສາສມັກຕຳຣວດລາດຕະເວນໂຮງຮຽນເຂດສຶກສາແຊນດິເອໂກ (SPVP)**
- **SPVP ປະຕິບັດຫນ້າທີ່ເປັນຫູເປັນຕາໃຫ້ແກ່ຕຳຣວດໂຮງຮຽນ ແລະ ພະນັກງານປົກຄອງໂຮງຮຽນ**
- **ພໍ່ແມ່, ຊຸມຊົນ ແລະ ພະນັກງານປົກຄອງໂຮງຮຽນ ຮວມກັນຈັດຕັ້ງ SPVP ຂຶ້ນ**
- **SPVP ຊ່ອຍຮັກສາຄວາມປອດພັຍ ເຂດເສັ້ນມ້າລາຍຂ້າມທາງຕໍ່ຫນ້າຂອງໂຮງຮຽນ ແລະ ແຄມຖນົນ.**
- **ເຂົ້າເປັນ SPVP, ຜູ້ສມັກຖືກຮຽກຮ້ອງໃຫ້ຂຽນປະກອບໃບຄຳຮ້ອງ ແລະ ຕົກລົງໃຫ້ກວດເບິ່ງປວັດເບື້ອງຫລັງ, ຮວມທັງໃຊ້ຄອມພິວເຕີກວດເບິ່ງປວັດການກະທຳຜິດກົດຫມາຍ ແລະ ກົດຫມາຍ Megan.**
- **ປັຈຸບັນມີ 10 ໂຮງຮຽນເຂົ້າຮ່ວມ SPVP.**

ລາຍລະອຽດຕິດຕໍ່ຫາ: **Police Services Department: (619) 725 – 7000 Administration, (619) 291 – 7678 Dispatch**

www.sandi.net